ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ກອງປະຊຸມທະວິພາຄີ ແລະ ພິທີລົງນາມໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການສົ່ງເສີມສະກຸນເງິນທ້ອງຖິ່ນ ກີບ-ດົງ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດ ຫວຽດນາມ.




ໃນຕອນເຊົ້າຂອງວັນທີ 01 ທັນວາ 2023 ທີ່ນະຄອນ ຫຼວງພະບາງ, ສປປ ລາວ ໄດ້ມີການຈັດກອງປະຊຸມທະວິພາຄີ ລະຫວ່າງ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານແຫ່ງລັດ ຫວຽດນາມ (ທຫວ) ປະຈຳປີ 2023 ຂຶ້ນ ໂດຍການນຳພາຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ແລະ ທ່ານ ນາງ ຫງຽນ ທິ ຮົງ, ຜູ້ວ່າການ ທະນາຄານແຫ່ງລັດ ຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂອງທັງສອງຝ່າຍເຂົ້າຮ່ວມ.



ພາຍໃນກອງປະຊຸມ ໄດ້ປຶກສາຫາລືກັນ ເພື່ອແລກປ່ຽນບັນຫາ ແລະ ສິ່ງທ້າທາຍກ່ຽວກັບເສດຖະກິດມະຫາພາກ, ການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ແລະ ການພັດທະນາຂະແໜງການທະນາຄານຂອງສອງປະເທດ ພ້ອມນັ້ນ ຍັງໄດ້ມີການແລກປ່ຽນບົດຮຽນໃນການຄຸ້ມຄອງເງິນຕາຕ່າງປະເທດ ຮັບຟັງການລາຍງານຜົນການຮ່ວມມືສອງຝ່າຍລະຫວ່າງໂຮງພິມທະນະບັດຂອງສອງທະນາຄານກາງ ແລະ ການຮ່ວມມືທາງດ້ານວິຊາການສອງຝ່າຍປະຈຳປີ 2023 ແລະ ນຳສະເໜີແຜນການຮ່ວມມືສອງຝ່າຍປະຈຳປີ 2024. ກອງປະຊຸມດັ່ງກ່າວ ໄດ້ດຳເນີນໄປດ້ວຍບັນຍາກາດທີ່ເຕັມໄປດ້ວຍໄມຕີຈິດມິດຕະພາບ ແລະ ມີຜົນສຳເລັດອັນຈົບງາມ ເຮັດໃຫ້ການຮ່ວມມືສອງຝ່າຍຂອງທະນາຄານກາງທັງສອງປະເທດ ສາມາດຂະຫຍາຍເຂົ້າສູ່ລວງກວ້າງ ແລະ ລວງເລິກຂຶ້ນຕື່ມອີກລະດັບໜຶ່ງ.

ໃນມື້ດຽວກັນ ພາຍຫຼັງກອງປະຊຸມດັ່ງກ່າວ, ກໍ່ໄດ້ມີພິທີມອບຫຼຽນໄຊແຮງງານຊັ້ນ I ໃຫ້ແກ່ ທຫວ ເນື່ອງໃນໂອກາດສະເຫຼີມສະຫຼອງວັນເຊັນສົນທິ ສັນຍາການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດ ນາມຄົບຮອບ 60 ປີ; ພິທີລົງນາມໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການສົ່ງເສີມສະກຸນເງິນທ້ອງຖິ່ນ ກີບ-ດົ່ງ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດ ຫວຽດນາມ ເພື່ອເປັນການຈັດຕັ້ງຜັນຂະຫຍາຍທິດຊີ້ນຳຂອງລັດຖະບານສອງປະເທດໃຫ້ນຳໃຊ້ສະກຸນເງິນທ້ອງຖິ່ນ ເຂົ້າໃນການຊຳລະການຄ້າ ແລະ ການລົງທຶນສອງຝ່າຍລາວ-ຫວຽດນາມ. ໂດຍຜູ້ຮ່ວມລົງນາມໃນບົດບັນທຶກດັ່ງກ່າວ ແມ່ນ ທ່ານຜູ້ວ່າການຂອງ ທຫລ ແລະ ທຫວ ແລະ ມີທ່ານຮອງຜູ້ວ່າການ, ຮອງເຈົ້າແຂວງຫຼວງພະບາງ, ຫົວໜ້າກົງສຸນໃຫຍ່ ສສ.ຫວຽດນາມ ປະຈຳແຂວງຫຼວງພະບາງ ແລະ ຕາງໜ້າຈາກກົມກອງກ່ຽວຂ້ອງພາຍໃນຂອງສອງທະນາຄານ ພ້ອມທັງທະນາຄານທຸລະກິດຈຳນວນໜຶ່ງຈາກ ສປປ ລາວ ແລະ ສສ.ຫວຽດນາມ ເຂົ້າຮ່ວມເປັນສັກຂີພະຍານ.




ນອກຈາກນັ້ນ,ຍັງມີພິທີລົງນາມໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງບໍລິສັດ LAPNET ແລະ NAPAS ເພື່ອຄົ້ນຄວ້າການເຊື່ອມລະບົບການຊຳລະຂ້າມແດນລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ ຜ່ານ QRCode ໂດຍມີຄະນະຜູ້ວ່າການ, ຕາງໜ້າກົມກ່ຽວຂ້ອງຈາກສອງທະນາຄານກາງ, ບໍລິສັດ LAPNET ແລະ NAPAS, ຕາງໜ້າຈາກທະນາຄານທຸລະກິດລາວ ແລະ ທະນາຄານທຸລະກິດຫວຽດນາມ ປະຈຳ ສປປ ລາວ ກໍ່ເຂົ້າຮ່ວມ.







# ຂ່າວ ແລະ ພາບ: ກົມຮ່ວມມືສາກົນ ແລະ ນ. ວັນປະເສີດ ສິມບູນຂັນ